ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດການມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2020




ໃນຕອນເຊົ້າຂອງວັນທີ 23 ສິງຫາ 2021 ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທຫລ ໄດ້ຈັດພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2020 ແລະ ພິທີມອບ-ຮັບການຍ້ອງຍໍກົມກອງລວມໝູ່ ປະຈຳປີ 2020 ໃຫ້ແກ່ 3 ໜ່ວຍພັກ ພາຍໃຕ້ການເປັນປະທານຂອງ ສະຫາຍ ນາງ ວັດທະນາ ດາລາລອຍ ກຳມະການປະຈຳພັກ ທຫລ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຈາກໜ່ວຍພັກກົມເຕັກໂນໂລຊີຂໍ້ມູນຂ່າວສານ, ກົມບັນຊີແລະການເງິນ ແລະ ກົມບໍລິການທະນາຄານເຂົ້າຮ່ວມ.



ໃນພິທີ, ສະຫາຍ ຄຳແກ້ວ ວິສີສົມບັດ ເລຂາໜ່ວຍພັກກົມບໍລິການທະນາຄານໄດ້ລາຍງານບົດສະຫລຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2020 ໂດຍສັງເຂບ. ຈຸດປະສົງຂອງພິທີໃນຄັ້ງນີ້, ແມ່ນເພື່ອເປັນການຢັ້ງຢືນໝາກຜົນ-ຜົນງານຂອງການຊີ້ນຳ-ນຳພາການຈັດຕັ້ງ

ປະຕິບັດວຽກງານຮອບດ້ານຂອງ ໜ່ວຍພັກກົມເຕັກໂນໂລຊີຂໍ້ມູນຂ່າວສານ, ໜ່ວຍພັກກົມບໍລິການທະນາຄານ ແລະ ໜ່ວຍພັກບັນຊີ-ການເງິນ ໃນໄລຍະໜຶ່ງປີຜ່ານມາ.






ໃນໂອກາດດັ່ງກ່າວ, ສະຫາຍ ນາງ ວັດທະນາ ດາລາລອຍ ໄດ້ຕີລາຄາສູງຕໍ່ພິທີໃນຄັ້ງນີ້ ພ້ອມທັງ ແລະ ທັງໄດ້ຮຽກຮ້ອງມາຍັງບັນດາສະຫາຍສະມາຊິກພັກ ກໍ່ຄືພະນັກງານທັງໝົດ ຂອງທັງສາມໜ່ວຍພັກ ຈົ່ງພ້ອມພຽງກັນຍົກສູງ ສະຕິຄວາມຮັບຜິດຊອບ, ສູ້ຊົນບຸກບືນ ຜ່ານຜ່າທຸກຄວາມຫຍຸ້ງຍາກຕ່າງໆ ແລະ ພ້ອມກັນຈັດຕັ້ງປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ໃຫ້ມີປະສິດທິຜົນສູງຍິ່ງໆຂຶ້ນ.

**#ຂ່າວ ແລະ ພາບໂດຍ: ນາງ ປາໄນ ພັນທະລາ**

## ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ